# ການຂີ່ລົດເມປະຈໍາທາງ ສໍາຫລັບພວກນັກຮຽນຂອງໂຮງຮຽນມັທຍົມປາຍ **Ballard** ແລະ **Franklin**

ເລີ່ມຕົ້ນແຕ່ ເດືອນກັນຍາ ປີ 2006 ນີ້ ນັກຮຽນຂອງໂຮງຮຽນມັທຍົມປາຍ Ballard ແລະ Franklin ຜູ້ຊຶ່ງໄດ້ຮັບສິດ ສໍາຫລັບການຮັບສົ່ງ ຈະໄດ້ຂີ່ລົດເມປະຈໍາທາງ. ພວກເຂົາເຈົ້າ ຈະຮ່ວມກັບນັກຮຽນຊັ້ນມັທຍົມຫລາຍໆຄົນ ຜູ້ຊຶ່ງໄດ້ຂີ່ລົດເມປະຈໍາທາງນີ້ ໄປໂຮງຮຽນມາແລ້ວ.

## ໃຜເປັນຜູ້ໄດ້ຮັບສິດ ສໍາຫລັບການຂີ່ລົດເມປະຈໍາທາງນີ້ ?

ພວກນັກຮຽນຂອງໂຮງຮຽນມັທຍົມປາຍ Ballard ແລະ Franklin ໄດ້ຮັບສິດ ສໍາຫລັບການຮັບສົ່ງນີ້ ຖ້າວ່າ ພວກເຂົາຫາກອາໄສຢູ່ຫ່າງໄກຈາກໂຮງຮຽນ ເກີນກວ່າ 2 ໄມ ເຄິ່ງ.

ຖ້າເດັກຂອງທ່ານຫາກມີ ການສຶກສາພິເສດ IEP ນັ້ນ, ການຮັບສົ່ງນີ້ ກໍຈະໄດ້ເອົາໃຫ້ ໂດຍເປັນໄປຕາມຣະບຽບການຂອງ IEP. ຖ້າເດັກຂອງທ່ານຫາກມີ ແຜນການໄດ້ຮັບຄວາມສະດວກ ແບບ 504 ນັ້ນ ການຮັບສົ່ງນີ້ ກໍຈະໄດ້ເອົາໃຫ້ ໂດຍເປັນໄປຕາມແຜນການອັນນັ້ນ .

## ເປັນຫຍັງຈຶ່ງໄດ້ມີການປ່ຽນແປງອັນນີ້ຂຶ້ນ?

ອັນນີ້ ແມ່ນໂຄງການໄພລັອດ Pilot ສໍາຫລັບນັກຮຽນຂອງໂຮງຮຽນມັທຍົມປາຍ Ballard ແລະ Franklin. ຖ້າຫາກໃຊ້ ລົດເມປະຈໍາທາງ ແບບTransit ໄດ້ຂະຫຍາຍອອກໄປສູ່ ໂຮງຮຽນມັທຍົມປາຍບ່ອນອື່ນໆ ໃນອະນາຄົດ, ຄາດວ່າຈະປະຢັດຄ່າ ໃຊ້ຈ່າຍໄດ້, ຊຶ່ງໝາຍຄວາມວ່າ ຈະມີກ້ອນທຶນຫລາຍຂຶ້ນ ໃຫ້ໄດ້ສໍາຫລັບການສິດສອນ.

ທາງໂຮງຮຽນ ກໍຈະມີຄວາມດັດໄດ້ງ່າຍຫລາຍຂຶ້ນ ເພື່ອປັບເວລາເປີດ ແລະ ເວລາຈົບລົງ. ສໍາຫລັບໂຮງຮຽນມັທຍົມປາຍ Ballard ແລະ Franklin ແລ້ວ, ການປ່ຽນແປງອັນນີ້ ໝາຍຄວາມວ່າ ໂຮງຮຽນຈະເລີ່ມສອນຂຶ້ນຊ້າແດ່ ໃນປີໜ້າ. ໂຮງຮຽນ Ballard ຈະເປີດການຮຽນ ການສອນ ແຕ່ເວລາ 8:20 ເຊົ້າ ເຖິງ 2:50 ບ່າຍ. ໂຮງຮຽນ Franklin ຈະເປີດການຮຽນ ການສອນ ແຕ່ເວລາ 8:00 ເຊົ້າ ເຖິງ 2:30 ບ່າຍ

ພວກນັກຮຽນ ກໍຈະມີຄວາມດັດໄດ້ງ່າຍຫລາຍຂຶ້ນ ເພື່ອໄປແຕ່ເຊົ້າ ຫລື ຢູ່ຄ້າງ ຊ້າໄດ້ ເພື່ອຮ່ວມໃນກິຈກັມຕ່າງໆນັ້ນ.

ພວກນັກຮຽນ ກໍຈະມີ ການເລືອກເອົາຕາຕະລາງຮຽນແບບມີຄວາມດັດໄດ້ງ່າຍຫລາຍຂຶ້ນ ເພື່ອໄປ ແລະ ມາຈາກໂຮງຮຽນດ້ວຍການຂີ່ລົດເມປະຈໍາທາງນີ້.

## ລົດເມຄັນໃດ ນັກຮຽນຂອງຂ້າພະເຈົ້າຈະໄດ້ຂີ່ ?

ກ່ອນໂຮງຮຽນຈະເປີດຂຶ້ນ ໃນຣະດູໃບໄມ້ລົ່ນນີ້ ພວກເຮົາຈະສົ່ງເລື້ອງແຈ້ງການຂີ່ລົດແບບພິເສດ ໄປໃຫ້ແກ່ນັກຮຽນທີ່ໄດ້ຮັບສິດນີ້ ແຕ່ລະຄົນ (ຜູ້ທີ່ອາໄສຢູ່ຫ່າງໄກ ຈາກໂຮງຮຽນເກີນກວ່າ 2 ໄມ ເຄິ່ງ). ເລື້ອງແຈ້ງການນີ້ ຈະລວມເອົາທັງ ເສັ້ນທາງເດີນ ແລະ ເວລາຂຶ້ນ ຫລື ລົງລົດ ແລະ ຈະຄິດໄລ່ ຕາມຕົວນັກຮຽນຂອງທ່ານ ແບບສ່ວນບຸກຄົນ, ໂດຍອີງໃສ່ທີ່ຢູ່ຂອງທ່ານ.

## ນັກຮຽນຂອງຂ້າພະເຈົ້າ ຈະຈ່າຍຄ່າປີ້ລົດເມ ແນວໃດ?

ນັກຮຽນທີ່ໄດ້ຮັບສິດ (ຜູ້ທີ່ອາໄສຢູ່ຫ່າງໄກ ຈາກໂຮງຮຽນເກີນກວ່າ 2 ໄມ ເຄິ່ງ) ຈະໄດ້ຮັບ **ປີ້ຂີ່ລົດເມປະຈຳເດືອນຟຣີ** ເພື່ອຂີ່ລົດເມປະຈຳທາງໄປ ແລະ ກັບຈາກໂຮງຮຽນ.

ກ່ອນໂຮງຮຽນຈະເລີ່ມເປີດຂຶ້ນ ພວກເຮົາຈະສົ່ງປີ້ ຫລື "scrip" ຂີ່ລົດເມ ໄປໃຫ້ນັກຮຽນທີ່ໄດ້ຮັບສິດໝົດທຸກຄົນ (ຜູ້ທີ່ອາໄສຢູ່ຫ່າງໄກ ຈາກໂຮງຮຽນເກີນກວ່າ 2 ໄມ ເຄິ່ງ) ເພື່ອຈ່າຍຄ່າລົດເມ ໃນມື້ທີໜຶ່ງທີ່ເຂົ້າໂຮງຮຽນນັ້ນ. ນັກຮຽນທີ່ໄດ້ຮັບສິດ ຈະສາມາດຮັບເອົາ ປີ້ຂີ່ລົດເມຂອງຕົນໄດ້ ຢູ່ທີ່ໂຮງຮຽນ ໃນມື້ທີໜຶ່ງໂລດ.

ປີ້ຂີ່ລົດເມນີ້ ຈະໃຊ້ການໄດ້ ສຳຫລັບຂີ່ຟຣີ ໂດຍບໍ່ຈຳກັດຈະຂີ່ຈັກເທື່ອກໍໄດ້ ສຳຫລັບເດີນທາງໄປກັບລົດເມແບບTransit ນີ້ ໄດ້ທຸກເວລາ **( ອັນບໍ່ແມ່ນ ບໍຣິການສະເພາະພິເສດ ເທົ່ານັ້ນ non-special service only).**

ນັກຮຽນ ຜູ້ທີ່ມີປີ້ຂີ່ລົດເມປະຈຳທາງນີ້ ອາດຂີ່ລົດເມແບບ Community Transit, Everett Transit, Pierce Transit ແລະລົດເມ Sound Transit's ST Express ແລະ ບໍຣິການຂອງ Sounder commuter rail ໄດ້ເຊັ່ນກັນ ສຳຫລັບຈ່າຍຄ່າໂດຍສານເພີ່ມອີກ 50 ເຊັນ.

## ຂ້າພະເຈົ້າຈະຕິດຕໍ່ໄດ້ ກັບຜູ້ໃດ ຖ້າຫາກວ່າ ຂ້າພະເຈົ້າມີຄຳຖາມຕື່ມອີກ?

ຖ້າທ່ານຫາກມີຄຳຖາມຕື່ມອີກແລ້ວ ກະຣຸນາຕິດຕໍ່ໄດ້ກັບ ທາງສູນກາງບໍຣິການຄອບຄົວສອງພາສາຂອງພວກເຮົາ ທີ່ (206) 252-7750.

*LAO*

## ເງື່ອນໄຂຂອງການໃຊ້ – ປີ້ລົດເມປະຈຳທາງ Metro Bus

ໃນການຮັບເອົາ ປີ້ລົດເມປະຈຳທາງອັນນີ້ ທ່ານກໍໄດ້ຍິນຍອມ ທີ່ຈະປະຕິບັດຕາມກົດຣະບຽບຂອງ ລົດເມ Metro Transit/ ຫລື ກົດຣະບຽບຂອງໂຮງຮຽນຣັຖເມືອງຊີອາໂຕ.

**ເພື່ອຄວາມປອດໄພ ແລະ ຄວາມສະດວກຂອງຜູ້ຂີ່ລົດເມທຣານສິດທຸກໆຄົນ:**
ແຕ່ລະຄົນທີ່ຈ່າຍຄ່າໂດຍສານຕາມຄວາມຈຳເປັນຂອງຕົນ ກໍໄດ້ຮັບຄວາມຍິນດີຕ້ອນຮັບໃຫ້ຂີ່ລົດເມນີ້. ແຕ່ລະຄົນຜູ້ທີ່ຂີ່ ລົດເມນັ້ນ ຕ້ອງນັບຖືສິດທິຂອງຜູ້ໂດຍສານຄົນອື່ນໆ. ລົດເມນີ້ ກໍມີກົດຣະບຽບ ຊຶ່ງນຳພາຄຸ້ມຄອງຄວາມປເພຶດ ຢູ່ຕາມ ລົດເມ ແລະ ຖືກບັງຄັບໃຫ້ປະຕິບັດຕາມ ເຈົ້າໜ້າທີ່ທ້ອງຖິ່ນ ແລະ ເຈົ້າໜ້າທີ່ຂອງລົດເມທຣານສິດ.

**ຄວາມປະພຶດໃດໆຂອງຄວາມປະພຶດດັ່ງຕໍ່ໄປນີ້ ໃນຂນະຂີ່ລົດເມ ແມ່ນລ່ວງລະເມີດກົດຣະບຽບຂອງລົດເມປະຈຳທາງ. ຜູ້ລ່ວງ ລະເມີດ ອາດເປັນຜົນໃຫ້ຖືກຈັບກຸມ, ປັບໃໝ ຫລື ໄລ່ລົງລົດໄດ້.**

- ປະຕິເສດບໍ່ຈ່າຍຄ່າໂດຍສານຕາມລາຄາເໝາະສົມ
- ດື່ມເຄື່ອງດື່ມປະເພດເຫລົ້າ
- ເປີດຟັງວິທະຍຸ ແລະ ເທປ ໂດຍບໍ່ມີເຄື່ອງສຸບຫູຟັງ
- ນອນ ຫລື ກວມລວມເໝົາເອົາຫລາຍກວ່າໜຶ່ງບ່ອນນັ່ງຂຶ້ນໄປ
- ຄອຍລົບກວນຄົນຂັບລົດ ແລະ ຜູ້ໂດຍສານຄົນອື່ນໆ
- ຕີກັນ ຫລື ໃຊ້ຄຳເວົ້າຫຍາບຊ້າ
- ຖິ້ມສິ່ງເຮັດໃຫ້ຮົກ ຫລື ສ້າງເງື່ອນໄຂທີ່ບໍ່ສະອາດຕາມຫລັກອະນາໄມ
- ສ້າງຄວາມເສັຍຫາຍແກ່ຊັບສິນຂອງລົດເມທຣານສິດ
- ອັດກີດກັ້ນທາງຍ່າງໃນລົດ
- ສູບຢາ
- ຖືເອົາສິ່ງທີ່ເກີດໄຟໄດ້ງ່າຍ
- ຖິ້ມນ້ຳລາຍ
- ຫ້ອຍແຂນ ຫລື ໂອນໄປມາ ຕາມຮາວຈັບ ຫລື ຮາວເທິງນັ້ນ
- ຍື່ນ ຫລື ເດ່ອອກໄປ ສິ່ງຂອງ ຫລື ສ່ວນຂອງຮ່າງກາຍ ຜ່ານທາງປະຕູ ຫລື ປ່ອງຢ້ຽມ

ກົດຣະບຽບຂອງລົດເມທຣານສິດທີ່ຄົບຖ້ວນ ກໍຫາເອົາໄດ້ ທີ່:
*ຫ້ອງການສະໝຽນສະພາເຄົາຕີ້ County Clerk of the Council offices*
*ສານຖິ່ງເຄົາຕີ້ King County Courthouse ຫ້ອງເບີ 402*
*516 Third Avenue*
*Seattle, Washington 98104-2386*
ແລະ ຢູ່ຕາມຫ້ອງສມຸດຂອງເຄົາຕີ້.

ການລ່ວງລະເມີດກົດຣະບຽບນີ້ ຈະເກີດຜົນແຫ່ງການສູນເສັຍປີ້ຂີ່ລົດ ແລະ ຫລື ສິດໃນການຂີ່ລົດເມ ແບບຊົ່ວຄາວ ຫລື ຖາວອນ .

ຂ້າພະເຈົ້າອ່ານເບິ່ງເງື່ອນໄຂຢູ່ຂ້າງເທິງນີ້ແລ້ວ ແລະ ຍິນຍອມທີ່ຈະປະຕິບັດຕາມ.

ລາຍເຊັນຂອງນັກຮຽນ ______________________________ ຂຽນຊື່ໃຫ້ຈົບດີ ______________________

ວັນທີ ____________________